



ອົງການລາວເພື່ອຄວາມກ້າວໜ້າ
ໃນສະຫະຣັດມີເອກະສານຄູ່ມືການ
ສິດສອນ ແລະຮໍ່າຮຽນ ທັງເປັນພາສາ
ອັງກິດ ແລະເປັນພາສາລາວ ໄວ້
ບໍຣິການທ່ານ. ສົນໃຈເຊີນຕິດຕໍ່ ແລະ
ຂື້ນທະບຽນໄດ້ ທີ່ ສູນວັທນະທັມລາວ

Sponsored by: Minnesota Department
of Human Services. Chemical Health Division
LAO America@2004

For more Informations, please Visit:
ເພື່ອຄວາມຣະອຽດຕື່ມ, ກະຣຸນາເຂົ້າເຖິງ ແວັບ ຊທ໌
**WWW.LAOAMERICA.ORG**

**ອົງການລາວເພື່ອຄວາມກ້າວໜ້າໃນສະຫະຣັຖ**
**Lao Advancement Organization of America**
Lao Cultural center Building. 2648 West Broadway Avenue. Minneapolis, MN 55411-USA
Tel: 612.302.9048 |Fax: 612.522.243 | E-mail: laoamerica@laoamerica.org. WWW.LAOAMERICA.ORG

# ໂຄງການຍົກລະດັບ ຄວາມສາມາດຂອງ ຄອບຄົວແລະປະຊາຄົມ ໃນຫຼາຍຊົນຊາດ

# ATOD

## Strengthening Multi-Ethnic Families and Communities

Minnesota Department of Human Services

ອົງການລາວເພື່ອຄວາມກ້າວໜ້າ
ໃນສະຫະຣັຖ ໄດ້ຈັດໃຫ້ມີການຮໍ່າ
ຮຽນຟຣີ ກ່ຽວກັບການຍົກຣະດັບ
ຄວາມສາມາດໃນການລ້ຽງລູກ ເພື່ອ
ລອດພົ້ນຈາກພັຍພິບັດ ທີ່ອາດຈະເກີດ
ຂື້ນຈາກຢາເສບຕິດ ທີ່ສູນວັທນະທັມ
ລາວ ໃນທຸກໆວັນຈັນ ເລີ້ມແຕ່ ເວລາ
10 ໂມງເຊົ້າ ເຖິງບ່າຍ 1 ໂມງ

## ຖ້າຫາກທ່ານສົນໃຈ, ກະຣຸນາໂທຣໄປທີ່:

## 612.302.9048

The LAO America offers **Parenting FREE Trainings** at the Lao Cultural Center (LCC). Classes will be provide 3 times per year for about 12 parents per class. Each class has 7 three-hour sessions. Upon completion you will receive a certificate of completion.

**Interested parent/guardian who wish to attend class in Lao language, please call LAO Ameirca at 612.302.9048**

# FREE! ຟຣີ!

# The Strengthening Southeast Asian Parents and Families Program is very beneficial to Us

## ໂຄງການຍົກຣະດັບຄວາມຮັບຮູ້ ຂອງຄອບຄົວ ແລະປະຊາຄົມແມ່ນຫຍັງ?

ມັນເປັນໂຄງການຮ່ວມມື ກ່ຽວກັບການປັບປຸງບັນດາປັດຈັຍປ້ອງກັນຕ່າງໆ ເພື່ອສາມາດຫຼີກເວັ້ນໄດ້ ຈາກການນໍາໃຊ້ຢາເສບຕິດ ພາຍໃນຄອບຄົວ ແລະໃນທົ່ວຊຸມຊົນຂອງຊາວເອເຊັຽຕາເວັນອອກສ່ຽງໄຕ້ ເປັນຫົວຫນ່ວຍໃຫ້ແກ່ການທົດລອງ ໂດຍໃຫ້ການສຶກສາອົບຮົມຕໍ່ພໍ່ແມ່ ຫຼືຜູ້ປົກຄອງເດັກ ຕລອດຮອດຊຸມຊົນ ແລະປະຊາຄົມຕ່າງໆ. ໂຄງການດັ່ງກ່າວນີ້ ໄດ້ຢັ່ງເລິກເຖິງຮາກເຫງົ້າ ທີ່ເປັນຕົ້ນເຫດແຫ່ງການເມົາມົວນໍາເຊື້ອສານເຄມີມີພິດ ແລະຢາເສບຕິດຕ່າງໆ, ທີ່ກໍ່ໃຫ້ເກີດຄວາມຮຸນແຮງ ແລະການກະທໍາຄວາມຜິດ ພາຍໃນຊຸມຊົນຊາວເອເຊັຽຕາເວັນອອກສ່ຽງໄຕ້. ຊຶ່ງທັງຫມົດເຫຼົ່ານີ້ ແມ່ນເກີດມາຈາກການຂາດການຮັບຮູ້ໄດ້ຢ່າງເລິກເຊິ່ງ ເຖິງແບບວິທີການຂອງການເບິ່ງແຍງ ແລະດູແລລູກເຕົ້າຂອງພໍ່ ແມ່ແນວໃດໃນສະຫະຣັຖ.

## ເປັນຫຍັງຈຶ່ງເປີດໃຫ້ມີການຝຶກອົບຮົມ?

ຄົນລາວໂດຍທົ່ວໄປ ມັກຈະມີຄວາມຊິນເຄີຍຕໍ່ການດູແລ ແລະລ້ຽງລູກດ້ວຍແບບວິທີການຜັກດັນໃຫ້ສືບທອດ ແລະເປັນໄປຕາມຄວາມຄິດ, ຄວາມຮັບຮູ້ ແລະຄວາມເຂົ້າໃຈຂອງຕົນເອງຕໍ່ສະພາບແວດລ້ອມ ແລະຕໍ່ສັງຄົມ ໂດຍອີງໃສ່ຮີດຄອງ-ປະເພນີ ແລະວັທນະທັມ ບວກກັບກົດຫມາຍທ້ອງຖິ່ນເປັນເຄື່ອງວັດແທກ ໃຫ້ແກ່ການຫຼໍ່ຫຼອມລູກເຕົ້າຂອງຕົນເຫຼົ່ານັ້ນ. ແຕ່ບົນສະພາບຄວາມເປັນຈິງ, ການທີ່ຈະກາຍມາເປັນຄົນດີຂອງສັງຄົມ, ແບບວິທີການທັງຫມົດດັ່ງກ່າວມາຂ້າງເທິງນີ້ ບໍ່ອາດສາມາດນໍາໃຊ້ ໃຫ້ເປັນວິທີການທີ່ມີລັກສນະຕັດສິນໄດ້ ຢ່າງເຕັມອັດຕຣາໃນສະຫະຣັຖ ຊຶ່ງເປັນປະເທດທີ່ເຕີບໃຫຽ່ທາງດ້ານອຸດສະຫະກັມ, ມີອິສຣະພາບ-ຄວາມເສຣີ ຢ່າງກວ້າງຂວາງ ແລະມີກົດຫມາຍບັງຄັບຢ່າງຮັດກຸມ ບວກກັບ ວາດດໍາຣົງຊີວິດກໍມີການແຕກຕ່າງກັນ. ເພາະສນັ້ນ, ມັນຈຶ່ງມີ ຄວາມຈໍາເປັນອັນໃຫຽ່ຫຼວງທີ່ຄົນລາວທີ່ອາສັຍຢູ່ໃນດິນແດນແຫ່ງນີ້ ຄວນຮຽນຮູ້ ເພື່ອເປັນການຍົກຣະດັບຄວາມຮັບຮູ້ໃນການຄວບຄຸມ, ດູແລ ແລະລ້ຽງລູກຂອງຕົນເອງໃຫ້ມີຄວາມສອດຄ່ອງກັບສະ ພາບຄວາມເປັນຈິງໃນສັງຄົມອັນກວ້າງໃຫຽ່ນີ້.

## ຜົນທີ່ໄດ້ຮັບຈາກການຝຶກອົບຮົມມີຫຍັງແດ່?

ກຸ້ມຄ່າທີ່ສຸດ, ພຽງແຕ່ທ່ານເສັຽສລະເວລາຫວ່າງຂອງທ່ານອາທິດນຶ່ງ ມື້ນຶ່ງ, ມື້ລະສາມຊົ່ວໂມງ ແລະພາຍໃນເຈັດອາທິດ, ທ່ານກໍສາມາດຮຽນຮູ້ໄດ້ເຖິງແບບວິທີການດູແລ ແລະລ້ຽງລູກຢ່າງຄົບຊຸດ:

- ◇ ແບບວິທີການກໍ່ສ້າງກ້ອນກໍາລັງ ເພື່ອນໍາໄປສູ່ຜົນສໍາເຣັດ: ພົນທະພາບ ພໍ່ແມ່ກັບເດັກ, ຮາກຖານຂອງຊົນຊາດກໍາເນີດ, ການປະກອບປັດຈັຍຕ່າງໆຕໍ່ການປະພຶດຕົວ, ຂບວນການປະຕິບັດກົດຣະບຽບ, ຕລອດຮອດວົງຈອນແຫ່ງຊີວິດໃນຂັ້ນຕອນຕ່າງໆ.
- ◇ ຮູ້ຈັກວິທີລ້ຽງລູກ ໃນສັງຄົມ ແລະວັທນະທັມອັນໃຫມ່
- ◇ ຮູ້ຈັກຈິຕສາດຂອງເດັກໃນວັຍຕ່າງໆ
- ◇ ຮູ້ຈັກແບບວິທີການນໍາໃຊ້ຂໍ້ກົດຣະບຽບຕ່າງໆ ພາຍໃນຄອບຄົວ ແລະສັງຄົມ
- ◇ ຮູ້ຈັກແບບວິທີການຍ້ອງຍໍ ແລະສັນຣະເສີນ
- ◇ ຮູ້ຈັກແບບວິທີການຣະງັບອາຣົມ ແລະແກ້ໄຂຄວາມຕຶງຄຽດຕ່າງໆ
- ◇ ຮູ້ຈັກແບບວິທີການສ້າງສາຍພົວພັນອັນດີ ຣະຫວ່າງພໍ່ແມ່ ແລະລູກ, ບຸກຄົນຕໍ່ສັງຄົມ ແລະອື່ນໆໄປໃນທາງທີດບວກ.
- ◇ ຮຽນຮູ້ບັນດາປັດຈັຍພື້ນຖານຂອງ ໄລຍະຂ້າມຜ່ານ ຂອງສ່ວນບຸກຄົນ, ທາງດ້ານຈິຕວິນຍານ, ທາງດ້ານຮ່າງກາຍ, ທາງດ້ານຈິດໃຈ, ທາງດ້ານວັທນະທັມ, ທາງດ້ານປວັດສາຕ, ທາງດ້ານສັງຄົມ ແລະທາງດ້ານການເມືອງ.
- ◇ ຮູ້ຈັກພິດຮ້າຍຂອງເຊື້ອສານເຄມີມີພິດ ແລະຢາເສບຕິດອື່ນໆ ພ້ອມດ້ວຍວິທີການຫຼີກລ້ຽງຕໍ່ພັຍພິບັດ ຊຶ່ງອາດຈະເກີດຂຶ້ນຈາກພວກມັນ.

## About Strengthening Southeast Asian Parents and Families Program

This program will increase the parenting skills of Southeast Asian parents. So they can provide better guidance and support to their children and reduce behaviors and conflict within their family that increase the risk of alcohol, tobacco and other drugs use by youth.

## Why one should attend the training?

Generally, the Lao people are accustomed to raising their children the way they did back in Laos. These methods were influenced by the social environment, cultural norms and traditions, which have been passed down from parent to parent and generation to generation. Presently, the practices mentioned above do not really fit into this new culture because America is a strong and industrialized country and presents a completely new set of norms and traditions.

Thus parents need to be trained and equipped with knowledge about the American legal system, and develop new skills about how to raise their children to become productive citizens and to prevent drug use.

## Benefits from the training

Parents will enhance their ability to become positive role models and learn how to raise children, who are more Americanized, while understanding the need to balance the two cultures in which they are raising their children and to help their children with the acceptance of their cultural and ethnic background. Finally, a healthy parent-child relationship can be developed within the family, creating a safe and nurturing environment for everyone.

LAO America has skilled and experienced instructors who are able to share ideas with participants and empower the parental roles needed to build a strong family and a strong community.